SMALL BUSINESS MAJORITY

## ຄໍາແນະນໍາໃນການຫາເງິນທຶນໃນລະຫວ່າງສະຖານະການໂຄວິດ-19 (COVID-19) ເພື່ອຫຼີກລ້ຽງຜູ້ໃຫ້ກູ້ທີ່ບໍ່ເປັນທໍາ

ເມື່ອທ່ານກໍາລັງຊອກຫາແຫຼ່ງເງິນທຶນ,
ແມ່ນເລື່ອງສໍາຄັນທີ່ຕ້ອງຮູ້ວ່າທ່ານຄວນປະຕິບັດແນວໃດເພື່ອຫຼີກລ້ຽງຜູ້ໃຫ້ກູ້ແລະຂໍ້ຕົກລົງທາງການເງິນຕ່າງໆທີ່ບໍ່ເປັນທໍາ.
ໃນຂະນະທີ່ມີຜູ້ໃຫ້ກູ້ຫຼາຍລາຍກໍາລັງຫາຫົນທາງທີ່ຈະໃຫ້ບໍລິການທຸລະກິດຂະໜາດນ້ອຍທີ່ກໍາລັງມີບັນຫາໃນຕອນນີ້,
ແຕ່ບໍ່ແມ່ນການໃຫ້ກູ້ກັບທຸລະກິດຂະໜາດນ້ອຍທຸກປະເພດທີ່ໄດ້ຮັບການຄວບຄຸມຈາກລັດຖະບານກາງ,
ແລະຜູ້ໃຫ້ກູ້ທີ່ມີພຶດຕິກໍາບໍ່ດີບາງລາຍອາດຈະສວຍໂອກາດເອົາປຽບບັນດາທຸລະກິດຂະໜາດນ້ອຍທີ່ຕ້ອງການເງິນກູ້ກໍ່ໄດ້.
ຜູ້ໃຫ້ກູ້ບາງລາຍກໍາລັງພະຍາຍາມໃຊ້ອຸບາຍຫຼອກລວງເຈົ້າຂອງທຸລະກິດ  ຂະໜາດນ້ອຍໂດຍອ້າງວ່າພວກເຂົາສະເໜີໂຄງການຊ່ວຍເຫຼືອຈາກລັດຖະບານ.
ອີກປະການໜຶ່ງ, ຜະລິດຕະພັນເງິນກູ້ປະເພດອື່ນທີ່ບໍ່ໄດ້ຮັບການ ຄວບຄຸມຈາກພາກລັດເຊັ່ນດຽວກັບການກູ້ຢືມໃນຮູບແບບເດີມ
ເຊິ່ງລວມມີການກູ້ຢືມໃນຕະຫຼາດອອນລາຍ, ເງິນກູ້ຢືມເພື່ອເປັນຄ່າໃຊ້ຈ່າຍຂອງ  ຜູ້ຂາຍ (payment vendor loans),
ເງິນສົດລ່ວງໜ້າເພື່ອການພານິດ (merchant cash advances), ແລະການໃຫ້ສິນເຊື່ອໄລຍະສັ້ນປະເພດອື່ນ.
ແມ່ນເລື່ອງສໍາຄັນເຊັ່ນກັນທີ່ທ່ານຄວນຈະເຂົ້າໃຈເຖິງບົດບາດສໍາຄັນຂອງນາຍໜ້າສິນເຊື່ອໃນຂະບວນການນີ້. ນາຍໜ້າສິນເຊື່ອບໍ່ແມ່ນຜູ້ໃຫ້ກູ້
ແຕ່ພວກເຂົາທໍາໜ້າທີ່ເປັນບຸກຄົນທີ່ສາມທີ່ "ເລືອກຫາ" ທຸລະກິດຂອງທ່ານໃຫ້ກັບຜູ້ໃຫ້ກູ້ເພື່ອປ່ອຍເງິນກູ້.

ຖ້າທຸລະກິດຂະໜາດນ້ອຍຂອງທ່ານໄດ້ຮັບຜົນກະທົບຈາກ COVID-19 ແລະທ່ານກໍາລັງຊອກຫາເງິນທຶນ,
ທາງລຸ່ມນີ້ແມ່ນຄໍາແນະນໍາທີ່ສໍາຄັນບາງຢ່າງແລະແຫຼ່ງຂໍ້ມູນທີ່ຈະຊ່ວຍທ່ານໃນການດໍາເນີນການຕາມຂັ້ນຕອນການກູ້ຢືມ
ແລະຊ່ວຍຫຼີກລ້ຽງຜູ້ໃຫ້ກູ້ທີ່ບໍ່ເປັນທໍາ.

## ຖ້າທ່ານກໍາລັງຊອກຫາເງິນທຶນຜ່ານຫ້ອງການບໍລິຫານທຸລະກິດຂະໜາດນ້ອຍຂອງສະຫະລັດອາເມລິກາ (U.S. Small Business Administration ຫຼື SBA)

- ເງິນກູ້ຢືມເພື່ອຊ່ວຍເຫຼືອໄພພິບັດທາງເສດຖະກິດ (Economic Injury Disaster Loan ຫຼື EIDL) ທັງໝົດແມ່ນຖືກແຈກຢາຍຜ່ານ SBA; ບໍ່ມີຜູ້ໃຫ້ກູ້ອື່ນທີ່ໄດ້ຮັບອະນຸຍາດໃຫ້ປ່ອຍກູ້. ຫຼີກລ້ຽງຜູ້ໃຫ້ກູ້ລາຍໃດກໍ່ຕາມທີ່ມີເຈຕະນາສະເໜີເງິນກູ້ຢືມ SBA EIDL ໃຫ້ທ່ານ.
- SBA ຈະບໍ່ຕິດຕໍ່ຫາທ່ານເພື່ອສະເໜີເງິນກູ້ຢືມ 7(a), ເງິນກູ້ຢືມ PPP ຫຼື EIDL ຫຼືເງິນຊ່ວຍເຫຼືອລ້າໃຫ້ທ່ານ.
ຖ້າທ່ານໄດ້ຮັບການຕິດຕໍ່ຈາກບຸກຄົນໃດທີ່ອ້າງວ່າມາຈາກ SBA, ໃຫ້ສົງສັຍວ່າເປັນການສໍ້ໂກງ.
- ຖ້າທ່ານໄດ້ຮັບການຕິດຕໍ່ຈາກຜູ້ທີ່ສັນຍາວ່າຈະຊ່ວຍໃຫ້ທ່ານໄດ້ຮັບອະນຸມັດເງິນກູ້ SBA, ແຕ່ຕ້ອງການໃຫ້ທ່ານຈ່າຍເງິນລ່ວງໜ້າໃດໆ
ຫຼືສະເໜີເງິນກູ້ຢືມດອກເບ້ຍສູງໄລຍະສັ້ນປະເພດຂໍ່ຄາວ, ໃຫ້ສົງສັຍວ່າເປັນການສໍ້ໂກງ.
- ໂຄງການເງິນກູ້ຢືມຄຸ້ມຄອງເງິນເດືອນ (Payroll Protection Program ຫຼື PPP) ຈະຖືກສະເໜີໂດຍຜ່ານຜູ້ໃຫ້ກູ້ເງິນທຶນ 7(a)
ທີ່ໄດ້ຮັບການອະນຸມັດ. ຫ້ອງການ SBA ກໍາລັງຂະຫຍາຍຈໍານວນຜູ້ໃຫ້ກູ້ທີ່ໄດ້ຮັບການອະນຸມັດທີ່ສາມາດປ່ອນເງິນກູ້ PPP ໄດ້.
ຖ້າທ່ານມີຂໍ້ສົງສັຍກ່ຽວກັບ    ການມີສິດເປັນຜູ້ໃຫ້ກູ້, ກະລຸນາຕິດຕໍ່ຫ້ອງການ SBA ເຂດທ້ອງຖິ່ນ.
- ບໍ່ຄວນມີຄ່າທໍານຽມໃດໆທີ່ກ່ຽວຂ້ອງກັບການສະໝັກຂໍເງິນກູ້ ຫຼືການປົດໜີ້ເງິນກູ້ PPP ຫຼືເງິນກູ້ EIDL.
ຜູ້ໃຫ້ກູ້ຈະໄດ້ຮັບຄ່າທໍານຽມຈາກລັດຖະບານ.
- ຖ້າທ່ານກໍາລັງຢູ່ໃນຂັ້ນຕອນການສະໝັກຂໍກູ້ຢືມ SBA ແລະໄດ້ຮັບການຕິດຕໍ່ທາງອີເມວເພື່ອຂໍມູນລະບຸຕົວຕົນ, ກະລຸນາເຮັດໃຫ້ແນ່ໃຈວ່າ
ໝາຍເລກອ້າງອີງໃບສະໝັກແມ່ນສອດຄ້ອງກັບໝາຍເລກໃບສະໝັກຕົວຈິງ.

**ຂໍ້ມູນເພີ່ມເຕີມ:** https://www.sba.gov/document/report--sba-programs-scams-fraud-alerts

ຖ້າທ່ານມີເລື່ອງເລົ່າຂອງທຸລະກິດຂະໜາດນ້ອຍກ່ຽວກັບການຈັດຫາເງິນທຶນ, ກະລຸນາບອກເລົ່າໃຫ້ຜູ້ປະກອບທຸລະກິດຂະໜາດນ້ອຍສ່ວນຫຼາຍ
ຮູ້ນໍາ! ເຂົ້າເບິ່ງການສໍາຫຼວດບ່ອນນີ້: https://www.surveymonkey.com/r/5F2VKFG  (ພາສາອັງກິດເທົ່ານັ້ນ)

### ເມື່ອທ່ານກຳລັງຊອກຫາແຫຼ່ງເງິນທຶນອື່ນໆ

ກ່ອນທີ່ທ່ານຈະສະໝັກຂໍກູ້ຢືມ, ແມ່ນເລື່ອງສຳຄັນທີ່ທ່ານຈະຕ້ອງຖາມຄຳຖາມທີ່ຖືກຕ້ອງກັບຜູ້ໃຫ້ກູ້ ຫຼືນາຍໜ້າລາຍໃດກໍ່ຕາມ. ຂ້າງລຸ່ມນີ້ແມ່ນລາຍການກວດສອບເພື່ອເປັນແນວທາງຊ່ວຍທ່ານໃນລະຫວ່າງຂັ້ນຕອນການກູ້ຢືມ. ສຳລັບຄຳແນະນຳແລະແນວທາງເພີ່ມເຕີມ, ກະລຸນາເຂົ້າຊົມພໍທັນແຫຼ່ງຂໍ້ມູນຂອງພວກເຮົາໄດ້ທີ່ Venturize.org.

**ລາຍການກວດສອບ**

- ❑ ອັດຕາດອກເບ້ຍຕໍ່ປີຫຼື APR ແມ່ນເທົ່າໃດ? ຈົດບັນທຶກໄວ້ຖ້າທ່ານບໍ່ໄດ້ຮັບຄຳຕອບກົງໄປກົງມາ. ການຮູ້ອັດຕາດອກເບ້ຍຕໍ່ປີຂອງເງິນກູ້ທ່ານຈະຊ່ວຍໃຫ້ທ່ານສາມາດປຽບທຽບອັດຕານີ້ກັບທາງເລືອກເງິນກູ້ອື່ນໆຂອງທ່ານ
- ❑ ຄ່າທຳນຽມທັງໝົດແມ່ນເທົ່າໃດ? ຄ່າທຳນຽມເຫຼົ່ານີ້ຖືກລວມເຂົ້າໃນອັດຕາດອກເບ້ຍທີ່ສະເໜີໃຫ້ຫຼືບໍ່? ຈຳນວນເງິນທີ່ຕ້ອງຈ່າຍເປັນເທົ່າໃດ ແລະຄວາມຖີ່ໃນການຈ່າຍເງິນເປັນແນວໃດ?
- ❑ ຄ່າໃຊ້ຈ່າຍເຕັມໃນການກູ້ຢືມຕະຫຼອດໄລຍະເວລາການກູ້ເງິນແມ່ນເທົ່າໃດ?
- ❑ ຖ້າຂ້າພະເຈົ້າຊຳລະໜີ້ຄືນໝົດກ່ອນຄົບກຳນົດ ຂ້າພະເຈົ້າຈະຕ້ອງເສຍຄ່າຫຍັງອີກນອກເໜືອຈາກເງິນຕົ້ນທີ່ຂ້າພະເຈົ້າກູ້ຢືມຫຼືບໍ່? ຖ້າເປັນດັ່ງນັ້ນ, ຄ່າໃຊ້ຈ່າຍໃນການຊຳລະໜີ້ຄືນໝົດກ່ອນຄົບກຳນົດແມ່ນເທົ່າໃດ?
  ຜູ້ໃຫ້ກູ້ບາງລາຍອາດຈະຄິດຄ່າໃຊ້ຈ່າຍທາງການເງິນເຖິງແມ່ນວ່າທ່ານຈະຊຳລະໜີ້ຄືນໝົດກ່ອນຄົບກຳນົດກໍ່ຕາມ. ເຖິງແມ່ນວ່າສ່ວນນີ້ຈະເປັນຄ່າໃຊ້ຈ່າຍ, ພວກເຂົາອາດຈະອະທິບາຍວ່າມັນແມ່ນ "ສ່ວນຫຼຸດ ໃນການຊຳລະໜີ້ຄືນໝົດກ່ອນຄົບກຳນົດ"
- ❑ ຖ້າຂ້າພະເຈົ້າຈະຂໍກູ້ຢືມຄັ້ງທີ່ສອງກັບທ່ານໃນອະນາຄົດ, ຂ້າພະເຈົ້າຈະຖືກ "ຄິດຄ່າທຳນຽມສອງເທື່ອ" ຫຼືບໍ່? ນັ້ນຫມາຍຄວາມວ່າ ຂ້າພະເຈົ້າຈະຕ້ອງເສຍຄ່າໃຊ້ຈ່າຍທາງການເງິນຈາກຍອດເງິນຕົ້ນທີ່ຍັງເຫຼືອຢູ່ຂອງເງິນກູ້ຜ່ານມາຫຼືບໍ່?
- ❑ ຈະມີການກຳນົດເວລາສັ້ນໆເພື່ອບັງຄັບໃຫ້ຂ້າພະເຈົ້າຍອມຮັບເອົາຂໍ້ສະເໜີເງິນກູ້ຢືມຫຼືບໍ່? ທ່ານບໍ່ຄວນຈະຖືກກົດດັນໃຫ້ຍອມຮັບການກູ້ຢືມພາຍໃນໄລຍະເວລາທີ່ໄວອາຕາມແຕ່ພວກເຂົາຈະກຳນົດ.
- ❑ ທ່ານຈະລາຍງານຂໍ້ມູນການຈ່າຍເງິນກູ້ຂອງຂ້າພະເຈົ້າໃຫ້ຫ້ອງການຂໍ້ມູນເຄດິດເພື່ອໃຫ້ຂ້າພະເຈົ້າສາມາດສ້າງເຄດິດທຸລະກິດຂອງຂ້າພະເຈົ້າ ໄດ້ຫຼືບໍ່? ທ່ານຈະລາຍງານຂໍ້ມູນນີ້ທັງແງ່ບວກແລະແງ່ລົບຫຼືບໍ່? ຖ້າຂ້າພະເຈົ້າບໍ່ສາມາດຈ່າຍໜີ້ຄືນໄດ້, ທ່ານຈະພະຍາຍາມແລະຈະເກັບໜີ້ເງິນກູ້ຄືນແນວໃດ?
- ❑ ຖ້າທ່ານຂໍກູ້ເງິນຜ່ານນາຍໜ້າ, ທ່ານຄວນຖາມວ່າ:
  - ❑ ອັດຕາດອກເບ້ຍຕໍ່ປີຫຼື APR ຂອງທາງເລືອກແຕ່ລະຢ່າງທີ່ທ່ານກຳລັງສະເໜີໃຫ້ຂ້າພະເຈົ້າແມ່ນເທົ່າໃດ?
  - ❑ ໃນຖານະທີ່ເປັນນາຍໜ້າ ທ່ານຈະໄດ້ຮັບເງິນເປັນຈຳນວນເທົ່າໃດສຳລັບແຕ່ລະທາງເລືອກ ບໍ່ວ່າຈະໄດ້ຮັບຈາກຂ້າພະເຈົ້າຫຼືຈາກຜູ້ໃຫ້ກູ້ ກໍ່ຕາມ? ທ່ານຈະໄດ້ເງິນຫຼາຍກວ່າຫຼືບໍ່ຖ້າຂ້າພະເຈົ້າເລືອກເອົາເງິນກູ້ຢືມບາງອັນໂດຍສະເພາະ?
  - ❑ ຂ້າພະເຈົ້າຈະສາມາດເບິ່ງບົດສະຫຼຸບປະເພດຜູ້ຂໍກູ້ໂດຍລວມທີ່ທ່ານເປັນນາຍໜ້າໄດ້ຫຼືບໍ່? ອັດຕາດອກເບ້ຍສະເລ່ຍແມ່ນເທົ່າໃດ? ມີລັກຄົນທີ່ຂໍເອົາເງິນກູ້ຈາກທະນາຄານ, ເງິນກູ້ໄລຍະກາງທາງອອນລາຍ, ຫຼືເງິນສົດລ່ວງໜ້າເພື່ອການພານິດ ຫຼືເງິນກູ້ ໄລຍະສັ້ນ?

**ພວກເຮົາຍັງສະໜັບສະໜູນໃຫ້ທ່ານຮູ້ຈັກສິດທິຂອງຜູ້ກູ້ຢືມປະເພດທຸລະກິດຂະໜາດນ້ອຍ (Small Business Borrowers' Bill of Rights), ເຊິ່ງພວກເຮົາໄດ້ຊ່ວຍພັດທະນາໃນຖານະທີ່ເປັນສ່ວນໜຶ່ງຂອງພັນທະມິດການໃຫ້ກູ້ຢືມສຳລັບທຸລະກິດທີ່ມີຄວາມຮັບຜິດຊອບ (Responsible Business Lending Coalition).** ນີ້ແມ່ນສິດທິພື້ນຖານທາງການເງິນທີ່ພວກເຮົາເຊື່ອວ່າທຸລະກິດຂະໜາດນ້ອຍທັງໝົດຄວນໄດ້ຮັບ ເຊິ່ງສ່ວນຫຼາຍເປັນສິດທິທີ່ບໍ່ໄດ້ຮັບການຄຸ້ມຄອງຕາມກົດໝາຍ. ສິດທິເຫຼົ່ານັ້ນມີດັ່ງນີ້:

- ສິດທິໃນລາຄາແລະຂໍ້ຕົກລົງທີ່ໂປ່ງໃສ
- ສິດທິກ່ຽວກັບການຜະລິດຕະພັນທີ່ບໍ່ຖືກຕ້ອງເໝາະສົມ
- ສິດທິໃນການຮັບປະກັນຢ່າງມີຄວາມຮັບຜິດຊອບ
- ສິດທິໃນການໄດ້ຮັບການປະຕິບັດຢ່າງເປັນທຳຈາກນາຍໜ້າ
- ສິດທິໃນການຖືກນັບລວມໃນການເຂົ້າເຖິງສິນເຊື່ອ
- ສິດໃນການປະຕິບັດກ່ຽວກັບການທວງໜີ້ຢ່າງເປັນທຳ

**ຮຽນຮູ້**ເພີ່ມເຕີມ: http://www.borrowersbillofrights.org/bill-of-rights.html

NATIONAL CAPACD

ເອກະສານສະບັບນີ້ໄດ້ຮັບການແປພາສາດ້ວຍຄວາມຮ່ວມມືກັບພັນທະມິດແຫ່ງຊາດເພື່ອການພັດທະນາຊຸມຊົນອາຊີແປຊິຟິກ (National Coalition for Asian Pacific Americans Community Development) www.nationalcapacd.org ໂດຍໄດ້ຮັບເງິນຊ່ວຍເຫຼືອຈາກມູນນິທິ Ewing Marion Kauffman Foundation.